ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0160/23 ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 19 ພຶດສະພາ 2023

ແຈ້ງການ

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ຊີ້ແຈງລາຍລະອຽດເພີ່ມເຕີມ ຈາກຄຳຖາມຂອງຕົວແທນຜູ້ຖືຫຸ້ນ ໃນການປະຊຸມສາມັນຜູ້ຖືຫຸ້ນ ປະຈຳປີ 2022 ເຊິ່ງຈັດຂຶ້ນໃນວັນທີ 25 ເມສາ 2023

- ອີງຕາມ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຈັດຂຶ້ນໃນວັນທີ 25 ເມສາ 2022
- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ອີງຕາມ ບົດບັນທຶກກອງປະຊຸມສາມັນຜູ້ຖືຫຸ້ນ ປະຈຳປີ 2022 ເຊິ່ງຈັດຂຶ້ນໃນວັນທີ 25 ເມສາ 2023 ໃນ ວາລະທີ 3 ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2022 ຕາມທີ່ຕົວແທນຜູ້ຖືຫຸ້ນ ໄດ້ມີຄຳຖາມເພີ່ມເຕີມ ໃນງົບກຳໄລຂາດທຶນ ຈາກໝາຍເຫດປະກອບງົບ ຂໍ້ 19 ໜ້າທີ່ 24 ລາຍຈ່າຍອື່ນ ຖ້າປຽບທຽບລະຫວ່າງປີ ຈາກປີ 2021 ທີ່ມີເງິນໝຸນວຽນ 3.600 ກວ່າລ້ານກີບ ເພີ່ມຂຶ້ນເປັນ 15.000 ກວ່າລ້ານກີບ ພົບວ່າລາຍການທີ່ເພີ່ມຂຶ້ນເກືອບທັ້ງໝົດ ມາຈາກລາຍຈ່າຍອື່ນ ເຊິ່ງໃນເອກະສານຂອງການປະກອບງົບການເງິນ ບໍ່ຮູ້ວ່າການເພີ່ມຂຶ້ນປະກອບມີລາຍຈ່າຍໃດແດ່ ນັ້ນ.

ດັ່ງນັ້ນ ທາງບໍລິສັດ ຈຶ່ງຂໍຊີ້ແຈງລາຍລະອຽດເພີ່ມເຕີມ ຂອງລາຍຈ່າຍອື່ນ ເຊິ່ງໃນປີ 2022 ມີຈຳນວນທັ້ງໝົດ 4.125.074.874 ກີບ ເຊິ່ງປະກອບມີ ລາຍການດັ່ງຕໍ່ໄປນີ້

ລາຍຈ່າຍການຕະຫຼາດ	1.648.920.867	ກີບ
ລາຍຈ່າຍຄ່າຕອບແທນຜູ້ຊ່ຽວຊານ	838.502.634	ກີບ
ລາຍຈ່າຍຄ່າຮັບແຂກ	74.617.940	ກີບ
ລາຍຈ່າຍຄ່າເຄື່ອງໃຊ້ຫ້ອງການ	158.860.866	ກີບ
ລາຍຈ່າຍກ່ຽວກັບຍານພາຫະນະ ເດີນທາງ	799.250.658	ກີບ
ລາຍຈ່າຍຕິດຕາມໜີ້	94.159.200	ກີບ
ລາຍຈ່າຍທີ່ຕິດພັນກັບພາກລັດ ປະກອບມີ ອາກອນຕ່າງໆ,ຄ່າຄຸ້ມຄອງ	110.344.091	ກີບ
ລາຍຈ່າຍຕ່າງໆ ປະກອບມີ ວັດຖຸສິ້ນເປືອງ,ຄ່າຊ່ອມແຊມຊັບສິນອື່ນ, ຄ່າປະກັນໄພ,ຄ່າທຳນຽມທະນາຄານ,ຄ່າທຳນຽມທົ່ວໄປ,ຄ່າອົບຮົມສຳມະນາ	400.418.618	ກີບ
ລວມທັງໝົດ	4.125.074.874	ກີບ

ເຊິ່ງໃນປີ 2021 ແລະ 2022 ລາຍຈ່າຍອື່ນ ມີຈຳນວນທັ້ງໝົດ 2.305.362.234 ກີບ ແລະ 4.125.074.874 ກີບ ຕາມລຳດັບ ເພີ່ມຂຶ້ນທັ້ງໝົດ 1.819.712.640 ກີບ ສ່ວນລາຍຈ່າຍທີເພີ່ມຂຶ້ນຢ່າງມີສາລະສຳຄັນ ໄດ້ແກ່ ລາຍຈ່າຍການຕະຫຼາດ ປະກອບມີ ຄ່າສົ່ງເສີມການຂາຍ , ຄ່າໂຄສະນາປະຊາສຳພັນ, ຄ່າຈັດງານເປີດຕົວຜະລິດຕະພັນໃໝ່ ເປັນຕົ້ນ ເພີ່ມເປັນ 766,2 ລ້ານກີບ, ຄ່າໃຊ້ຈ່າຍກ່ຽວກັບການເດີນທາງ ເພີ່ມເປັນ 420,1 ລ້ານກີບ, ເຊິ່ງເກີດຈາກຄ່ານ້ຳມັນ ທີ່ປັບເພີ່ມຂຶ້ນ, ແລະ ຄ່າຕອບແທນຜູ້ຊ່ຽວຊານ ປະກອບມີ ຄ່າກວດສອບບັນຊີ ,ຄ່າທີ່ປຶກສາກົດໝາຍ ເປັນຕົ້ນ ເພີ່ມເປັນ 448,6 ລ້ານກີບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ

ຜູ້ອຳນວຍການ

(ທ່ານ ມານີ ຕຣີລິດວິໄລ)